# ວິທີຂໍຮັບຄໍາສັ່ງສານເພື່ອຄຸ້ມຄອງທ່ານຈາກການໃຊ້ຄວາມຮຸນແຮງໃນຄອບຄົວ

**ຖ້າທ່ານຕົກຢູ່ໃນອັນຕະລາຍ ໃຫ້ໂທຫາເບີ: 911.** ທ່ານສາມາດໂທຫາສາຍດ່ວນແຫ່ງຊາດເພື່ອການປ້ອງກັນຄວາມຮຸນແຮງໃນຄອບຄົວໄດ້ ທີ່ເບີ: 1-800-799-SAFE (7233) ແລະ 1-800-787-3224 (TTY) ຫຼື ພິມຄໍາວ່າ "Start" ແລ້ວສົ່ງໄປທີ່ເບີ 88788.

ທ່ານສາມາດຊອກຫາຂໍ້ມູນເພີ່ມເຕີມເພື່ອຈະຊ່ວຍໃຫ້ທ່ານມີຄວາມປອດໄພໂດຍ ຜ່ານຊ່ອງທາງອອນໄລນ໌, ຫໍສະໝຸດ, ແລະຫ້ອງການປ້ອງກັນຄວາມຮຸນແຮງໃນຄອບຄົວ ແລະ ການລ່ວງລະເມີດທາງເພດໃກ້ບ້ານທ່ານ. ສາມາດເຂົ້າເບິ່ງຂໍ້ມູນໄດ້ທີ່ເວັບໄຊຕ໌: https://andvsa.org/find-help/member-programs/ ເພື່ອຄົ້ນຫາຂໍ້ມູນກ່ຽວກັບການປ້ອງກັນຄວາມຮຸນແຮງໃນຄອບຄົວ ແລະ ການລ່ວງລະເມີດທາງເພດ.

ຖ້າທ່ານມີຄໍາຖາມເພີ່ມເຕີມ ຫຼື ທ່ານຕ້ອງການນາຍແປພາສາ, ສາມາດຕິດຕໍ່ຫາເຈົ້າໜ້າທີ່ສານໃກ້ບ້ານທ່ານເພື່ອຂໍຄວາມຊ່ວຍເຫຼືອໄດ້.

## ຄໍາສັ່ງສານເພື່ອຄຸ້ມຄອງທ່ານຈາກການໃຊ້ຄວາມຮຸນແຮງໃນຄອບຄົວແມ່ນຫຍັງ?

- ຄໍາສັ່ງຄຸ້ມຄອງນີ້ແມ່ນເຊັນໂດຍຜູ້ພິພາກສາ ແລະ ມີສິດອໍານາດໃນການສັ່ງໃຫ້ບຸກຄົນກະທໍາ ຫຼື ບໍ່ກະທໍາການຢ່າງໃດຢ່າງໜຶ່ງເພື່ອຮັກສາຄວາມປອດໄພໃຫ້ແກ່ທ່ານ. ຕົວຢ່າງ, ຄໍາສັ່ງຄຸ້ມຄອງໂດຍທົ່ວໄປສາມາດສັ່ງໃຫ້ບຸກຄົນໃດໜຶ່ງ ຢູ່ຫ່າງຈາກທ່ານ ແລະ ບໍ່ໃຫ້ສາມາດຕິດຕໍ່ຫາທ່ານໄດ້.
- ທ່ານສາມາດຍື່ນສະເໜີຄໍາຮ້ອງຟ້ອງໃນສານເພື່ອຮ້ອງຂໍໃຫ້ສານມີຄໍາສັ່ງຄຸ້ມຄອງຖ້າຫາກວ່າມີບຸກຄົນໃດກະທໍາຄວາມຮຸນແຮງໃນຄອບຄົວຕໍ່ທ່ານ. ນອກຈາກນັ້ນ, ທ່ານຍັງສາມາດຍື່ນສະເໜີຄໍາຮ້ອງຕໍ່ສານໃນນາມຜູ້ປົກຄອງໃຫ້ແກ່ລູກທ່ານ ຫຼື ບຸກຄົນທີ່ທ່ານເປັນຜູ້ປົກຄອງຕາມກົດໝາຍໄດ້.
- ການສະເໜີຂໍໃຫ້ມີຄໍາສັ່ງສານເພື່ອຄຸ້ມຄອງນີ້ **ບໍ່ແມ່ນ**ການລາຍງານອາຊະຍາກໍາຕໍ່ຕໍາຫຼວດ ຊຶ່ງທ່ານມີສິດທີ່ຈະລາຍງານອາຊະຍາກໍາຕໍ່ຕໍາຫຼວດໄດ້ຕະຫຼອດເວລາ.
- ຄໍາແນະນໍາຕໍ່ໄປນີ້ຈະອະທິບາຍວິທີການສະເໜີຂໍໃຫ້ມີຄໍາສັ່ງສານຄຸ້ມຄອງທ່ານຈາກຄວາມຮຸນແຮງໃນຄອບຄົວ. ທ່ານສາມາດອ່ານຂໍ້ມູນເພີ່ມເຕີມໄດ້ທີ່ເວັບໄຊຕ໌: ak-courts.info/pub22.

## ຂ້າພະເຈົ້າສາມາດຂໍຄໍາສັ່ງສານເພື່ອໃຫ້ຄຸ້ມຄອງໄດ້ແນວໃດ?

ສາມາດໃຊ້ ໄຟລ໌ PDF ທີ່ທ່ານສາມາດຂຽນລົງໄປໃນແບບຟອມໄດ້

- ຍື່ນຄໍາຮ້ອງເພື່ອຂໍຄໍາສັ່ງສານເພື່ອຄຸ້ມຄອງທ່ານຈາກການໃຊ້ຄວາມຮຸນແຮງໃນຄອບຄົວ.
  ສໍາລັບການຄຸ້ມຄອງສະເພາະຄົນດຽວ, ໃຫ້ໃຊ້ແບບຟອມ: DV-100.
  ສໍາລັບການຄຸ້ມຄອງຫຼາຍກວ່າໜຶ່ງຄົນ (ຕົວຢ່າງ, ທ່ານ ແລະ ລູກຂອງທ່ານ), ໃຫ້ໃຊ້ແບບຟອມ: DV-100M.
- ແບບຟອມຄວາມຮຸນແຮງໃນຄອບຄົວທຸກຮູບແບບມີຢູ່ໃນລະບົບອອນໄລນ໌ ທີ່ເວັບໄຊຕ໌: ak-courts.info/dvforms.

ໃຊ້ໂປຼແກຼມ Petition Wizard ຊຶ່ງເປັນເຄື່ອງມືຊ່ວຍໃນການຂຽນຄໍາຮ້ອງ:

- ແທນທີ່ຈະກອກແບບຟອມຄໍາຮ້ອງຟ້ອງໂດຍກົງ, ທ່ານສາມາດນໍາໃຊ້ໂປຼແກຼມ Petition Wizard ຊຶ່ງເປັນເຄື່ອງມືໃນການຊ່ວຍສ້າງໜັງສືສະເໜີຮ້ອງຟ້ອງ, ໂດຍຜ່ານອິນເຕີເນັດ ທີ່ຈະນໍາພາທ່ານເຂົ້າໄປສູ່ຂະບວນການຕ່າງໆໃນການຮ່າງຄໍາຮ້ອງ. ພາຍຫຼັງສໍາເລັດແລ້ວ, ທ່ານຈະໄດ້ຮັບໜັງສືຮ້ອງຟ້ອງຄົບຕາມຮູບແບບທີ່ທ່ານສາມາດປະກອບຍື່ນຕໍ່ສານໄດ້.
- ສາມາດໃຊ້ໂປຼແກຼມນີ້ໄດ້ທີ່ ak-courts.info/dvwizard.

## ຂ້າພະເຈົ້າສາມາດກອກໜັງສືຄຳຮ້ອງໄດ້ແນວໃດ?

**ຜູ້ສະເໜີຄຳຮ້ອງ.** "ຜູ້ສະເໜີຄຳຮ້ອງ" ໝາຍເຖິງ ບຸກຄົນທີ່ຈະໄດ້ຮັບການປົກປ້ອງໂດຍຄຳສັ່ງຄຸ້ມຄອງຈາກສານ. ຖ້າທ່ານຂໍຄຳຮ້ອງສຳລັບຕົວທ່ານເອງ, ທ່ານຈະມີຖານະເປັນຜູ້ສະເໜີຄຳຮ້ອງ. ຖ້າທ່ານຂໍໃຫ້ເດັກທີ່ຍັງບໍ່ທັນບັນລຸນິຕິພາວະ, ເດັກຄົນນັ້ນຈະມີຖານະເປັນຜູ້ສະເໜີຄຳຮ້ອງ. ໃຫ້ທ່ານຂຽນຊື່ຂອງເດັກ, ວັນເດືອນປີເກີດ ແລະ ຄວາມສຳພັນຂອງທ່ານຕໍ່ເດັກນ້ອຍ.

**ຜູ້ຖືກກ່າວຫາ.** "ຜູ້ຖືກກ່າວຫາ" ໝາຍເຖິງ ບຸກຄົນທີ່ທ່ານຂໍໃຫ້ສານປົກປ້ອງຄວາມຮຸນແຮງຈາກບຸກຄົນນີ້. ທ່ານຕ້ອງລະບຸຊື່ ແລະ ນາມສະກຸນ, ວັນເດືອນປີເກີດຂອງຜູ້ຖືກກ່າວຫາ (ຖ້າທ່ານຮູ້). ຖ້າຜູ້ຖືກກ່າວຫາແມ່ນເດັກທີ່ຍັງບໍ່ທັນບັນລຸນິຕິພາວະ, ຕ້ອງໄດ້ແຈ້ງຊື່ພໍ່ແມ່, ຜູ້ປົກຄອງ ຫຼື ບຸກຄົນອື່ນທີ່ຮັບຜິດຊອບຕາມກົດໝາຍສຳລັບເດັກຄົນນັ້ນ.

**ໝາຍເລກຄະດີຄວາມ.** ຫ້າມຂຽນໃສ່ຊ່ອງວ່າງນີ້ - ເຈົ້າໜ້າທີ່ສານຈະກຳນົດໝາຍເລກຄະດີຂຶ້ນເອງ ແລ້ວຈະໃສ່ໝາຍເລກນີ້ໃຫ້ທ່ານ.

**ປະເພດຂອງຄຳສັ່ງຄຸ້ມຄອງຈາກສານ ທີ່ທ່ານສາມາດຮ້ອງຂໍໄດ້ມີດັ່ງນີ້:**

- **ຄຳສັ່ງຄຸ້ມຄອງໄລຍະສັ້ນ** (ຫຼືເອີ້ນວ່າຄຳສັ່ງຄຸ້ມຄອງທີ່ອອກໃຫ້ກັບຜູ້ທີ່ຂໍພຽງຝ່າຍດຽວ) ເປັນຄຳສັ່ງທີ່ປົກປ້ອງທ່ານທັນທີເຊິ່ງມີອາຍຸ 20 ວັນ ຍົກເວັ້ນວ່າສານຕໍ່ຍືດເວລາອອກໄປ. ສານສາມາດອະນຸມັດ ຫຼື ປະຕິເສດຄຳຮ້ອງຟ້ອງໄດ້ໂດຍອີງໃສ່ຂໍ້ມູນທີ່ທ່ານຂຽນໃນໃບສະເໜີຮ້ອງຟ້ອງ ແລະ ຄຳໃຫ້ການຂອງທ່ານໃນເວລາທີ່ສານຮັບຟັງຄະດີ (ຖ້າມີ). ສານສາມາດອອກຄຳສັ່ງຄຸ້ມຄອງ ໂດຍບໍ່ຕ້ອງບອກຝ່າຍທີ່ຖືກກ່າວຫາວ່າທ່ານໄດ້ຍື່ນຄຳຮ້ອງນີ້ ແລະ ໂດຍທີ່ບໍ່ຕ້ອງຮັບຟັງຈາກຝ່າຍທີ່ຖືກກ່າວຫາ. ທ່ານບໍ່ຈຳເປັນທີ່ຕ້ອງບອກຜູ້ທີ່ຖືກກ່າວຫາວ່າທ່ານໄດ້ຂໍຄຳສັ່ງຄຸ້ມຄອງຈາກສານ, ແຕ່ຖ້າທ່ານໄດ້ບອກໄປແລ້ວ, ໃຫ້ກາເຄື່ອງໝາຍໃນຟອມນັ້ນ ແລ້ວບອກສານວ່າທ່ານໄດ້ພະຍາຍາມແຈ້ງໃຫ້ຜູ້ຖືກກ່າວຫາຊາບດ້ວຍວິທີໃດວ່າທ່ານໄດ້ຂໍໃຫ້ສານອອກຄຳສັ່ງຄຸ້ມຄອງທ່ານ.
- **ຄຳສັ່ງຄຸ້ມຄອງໄລຍະຍາວ** ສາມາດຄຸ້ມຄອງໄດ້ສູງສຸດໜຶ່ງປີ, ສານສາມາດໃຊ້ຄຳສັ່ງດັ່ງກ່າວນີ້ໄດ້ ໃນກໍລະນີທີ່ຜູ້ຖືກກ່າວຫາໄດ້ຮັບແຈ້ງຈາກສານຢ່າງໜ້ອຍເປັນເວລາ 10 ວັນ ແລະ ມີສິດໃນການປະກອບຄຳເຫັນໃນຂະບວນການພິຈາລະນາຄະດີ. ແຕ່ຖ້າ ຜູ້ຖືກກ່າວຫາໄດ້ຮັບເອກະສານແຈ້ງຈາກສານແລ້ວ ແລະ ບໍ່ຍອມເຂົ້າຮ່ວມໃນຂະບວນການພິຈາລະນາຄະດີ ສານສາມາດອອກຄຳສັ່ງໃຫ້ເຈົ້າໜ້າທີ່ຕຳຫຼວດ ຫຼື ທະຫານ ແຈ້ງໃຫ້ທາງຜູ້ຖືກກ່າວຫາຊາບຢ່າງເປັນທາງການ ກ່ຽວກັບການພິຈາລະນາຄະດີນີ້.
- **ຄຳສັ່ງຄຸ້ມຄອງທັງໄລຍະສັ້ນ ແລະ ໄລຍະຍາວ** ຖ້າທ່ານມີຄວາມຈຳເປັນຕ້ອງການຄຳສັ່ງຄຸ້ມຄອງຈາກສານທັງສອງຮູບແບບ, ທ່ານຕ້ອງກາເຄື່ອງໝາຍລົງທັງສອງຊ່ອງ. ຖ້າທ່ານຂໍຄຳສັ່ງການຄຸ້ມຄອງທັງສອງແບບ ແລະ ສານອອກຄຳສັ່ງການຄຸ້ມຄອງໄລຍະສັ້ນກ່ອນ,  ສານຈະກຳນົດວັນເວລາເພື່ອຮັບຟັງຄຳເຫັນຈາກທັງສອງຝ່າຍ ເພື່ອກະກຽມອອກຄຳສັ່ງຄຸ້ມຄອງໄລຍະຍາວ. ຜູ້ຖືກກ່າວຫາ ມີສິດເຂົ້າຮັບຟັງການສອບສວນໃນການດຳເນີນຄະດີ ແລະ ສະເໜີຄຳເຫັນເພື່ອໃຫ້ສານຊາບ ກ່ອນອະນຸມັດອອກຄຳສັ່ງຄຸ້ມຄອງດັ່ງກ່າວ. ຖ້າຫາກວ່າຄຳສັ່ງຄຸ້ມຄອງໄລຍະສັ້ນ ບໍ່ໄດ້ຮັບການອະນຸມັດ, ສານອາດຈະ ຫຼື ບໍ່ອາດຈະກຳນົດວັນພິຈາລະນາຄຳສັ່ງຄຸ້ມຄອງໄລຍະຍາວເລີຍກໍເປັນໄດ້.

**ສາຍພົວພັນລະຫວ່າງຜູ້ສະເໜີຄຳຮ້ອງ ແລະ ຜູ້ຖືກກ່າວຫາ** ໃນການສະເໜີຂໍຄຳສັ່ງຄຸ້ມຄອງຄວາມຮຸນແຮງໃນຄອບຄົວ ທ່ານຕ້ອງມີສາຍສຳພັນກັບຜູ້ຖືກກ່າວຫາໃນດ້ານໃດໜຶ່ງ. ມີລັກສະນະຂອງສາຍພົວພັນໃຫ້ທ່ານເລືອກໝາຍ ຢູ່ໃນໜ້າທີ 5 ຂອງຄຳແນະນຳສະບັບນີ້. ກວດເບິ່ງຊ່ອງຄຳຕອບໃນແບບຟອມທີ່ເໝາະກັບຄວາມສຳພັນຂອງທ່ານ. ຖ້າທ່ານບໍ່ມີຄວາມສຳພັນໃນລາຍການເຫຼົ່ານີ້, ທ່ານອາດຈະມີສິດໄດ້ຮັບຄຳສັ່ງການຄຸ້ມຄອງການລ່ວງລະເມີດທາງເພດ ຫຼື ການສະກົດຮອຍຕາມ. ສາມາດເບິ່ງລາຍລະອຽດຄຳແນະນຳສຳລັບການສະເໜີຄຳຮ້ອງ, ຄຳສັ່ງການຄຸ້ມຄອງ ເພື່ອປ້ອງກັນການຖືກສະກົດຮອຍຕາມ ຫຼື ການຖືກລ່ວງລະເມີດທາງເພດ (ເບິ່ງໃນແບບຟອມ CIV-751) ສຳລັບຂໍ້ມູນເພີ່ມເຕີມ.

**ການອະທິບາຍຄຳສັບກ່ຽວກັບຄວາມຮຸນແຮງໃນຄອບຄົວ** ເພື່ອອອກຄຳສັ່ງຄຸ້ມຄອງ, ສານຈະຕ້ອງກຳນົດໄດ້ວ່າອາຊະຍາກຳຄວາມຮຸນແຮງໃນຄອບຄົວໄດ້ເກີດຂຶ້ນຈິງ. ທ່ານບໍ່ຈຳເປັນຕ້ອງຮູ້ປະເພດຂອງອາຊະຍາກຳເຫຼົ່ານີ້ ຫຼື ຊື່ຢ່າງເປັນທາງການ ຫຼື ອາຊະຍາກຳທີ່ເກີດຂຶ້ນກັບທ່ານ, ແຕ່ທ່ານຕ້ອງສາມາດອະທິບາຍໄດ້ຢ່າງລະອຽດວ່າມີຫຍັງແດ່ ທີ່ຜູ້ຖືກກ່າວຫາໄດ້ກະທຳຕໍ່

ທ່ານ ຫຼື ລູກຂອງທ່ານ. ໃຫ້ພະຍາຍາມເກັບໂຮມຫຼັກຖານ ແລະ ລາຍລະອຽດຕ່າງໆ ເປັນຕົ້ນແມ່ນວັນທີ ແລະ ສະຖານທີ່ ທີ່ເກີດເຫດ ຖ້າທ່ານສາມາດຈື່ຈຳໄດ້. ໃນຕອນທ້າຍຂອງຄຳແນະນຳສະບັບນີ້ໄດ້ອະທິບາຍລາຍລະອຽດກ່ຽວກັບຊະນິດຂອງອາຊະຍາກຳຄວາມຮຸນແຮງພາຍໃນຄອບຄົວໄວ້ຕື່ມ.

**ການຮ້ອງຂໍການຄຸ້ມຄອງ** ຢ່າງໜ້ອຍ, ຄຳສັ່ງການຄຸ້ມຄອງຈະສັ່ງຜູ້ຖືກກ່າວຫາບໍ່ໃຫ້ກະທຳສິ່ງໃດໜຶ່ງທີ່ເປັນຄວາມຮຸນແຮງພາຍໃນຄອບຄົວ, ການຕິດຕາມສະກົດຮອຍຕາມ ຫຼື ການລ່ວງລະເມີດຕໍ່ທ່ານ ຫຼື ຂົ່ມຂູ່ວ່າຈະເຮັດເຊັ່ນນັ້ນ. ແບບຟອມຄຳສະເໜີຮ້ອງຟ້ອງໄດ້ຄັດຕິດບັນດາລາຍລະອຽດຕົວຢ່າງຂອງການປົກປ້ອງອື່ນໆ ທີ່ທ່ານອາດຈະຕ້ອງການ. ລາຍລະອຽດການຄຸ້ມຄອງບາງຊະນິດ ຈະຖືກກຳນົດຢູ່ໃນຄຳສັ່ງຄຸ້ມຄອງໄລຍະຍາວເທົ່ານັ້ນ. ຄວນຄຳນຶງເຖິງສິ່ງທີ່ເຮັດໃຫ້ທ່ານຮູ້ສຶກປອດໄພ ແລະ ມີອັນໃດແດ່ ທີ່ຈະສາມາດເຮັດໃຫ້ການໃຊ້ຊີວິດຂອງທ່ານດຳເນີນໄປໄດ້ຢ່າງເປັນປົກກະຕິ. ຖ້າທ່ານຕ້ອງການສະເໜີຂໍໃຫ້ສານສັ່ງໃຫ້ຜູ້ຖືກກ່າວຫາ ຊົດໃຊ້ຄ່າເສຍຫາຍທີ່ເປັນຜົນມາຈາກຄວາມຮຸນແຮງພາຍໃນຄອບຄົວ, ທ່ານຕ້ອງໄດ້ແຈ້ງລາຍລະອຽດຂອງຄ່າໃຊ້ຈ່າຍແຕ່ລະຢ່າງ ແລະ ຈຳນວນເງິນສະເພາະເຈາະຈົງໃຫ້ສານຮັບຊາບ. ຄວນກະກຽມຫຼັກຖານ, ເອກະສານກ່ຽວກັບຄ່າໃຊ້ຈ່າຍຕ່າງໆ (ເປັນຕົ້ນແມ່ນ ໃບບິນທາງການແພດ, ໃບຮັບເງິນ ຫຼື ໃບປະເມີນມູນຄ່າຕໍ່ຊັບສິນທີ່ເສຍຫາຍ ແລະ ອື່ນໆ) ເພື່ອປະກອບໃຫ້ແກ່ຂະບວນການພິຈາລະນາອອກອະນຸມັດຄຳສັ່ງຄຸ້ມຄອງໄລຍະຍາວຂອງສານ.

**ການມີສິດໃນການລ້ຽງດູເດັກ ແລະ ເງິນຄ່າລ້ຽງດູເດັກນ້ອຍ** ຖ້າທ່ານ ແລະ ຜູ້ຖືກກ່າວຫາ ມີລູກຮ່ວມກັນ, ທ່ານສາມາດຮ້ອງຂໍໃຫ້ສານ ອອກຄຳສັ່ງຊົ່ວຄາວກ່ຽວກັບບ່ອນທີ່ເດັກນ້ອຍຈະສາມາດອາໄສຢູ່ໄດ້. ບອກລາຍລະອຽດເຖິງເຫດຜົນຕ່າງໆທີ່ຈຳເປັນ ວ່າດ້ວຍເຫດຜົນໃດ ທ່ານຈຶ່ງຈະຕ້ອງໄດ້ຮັບສິດໃນການເບິ່ງແຍງລູກ ແລະ ເຫດຜົນໃດທີ່ຜູ້ຖືກກ່າວຫາ ຈະສາມາດພົບປະກັບເດັກນ້ອຍ ຫຼື ລູກໄດ້ ແລະ ບອກເຖິງວິທີການທີ່ເດັກນ້ອຍສາມາດພົບປະລະຫວ່າງທ່ານ ແລະ ຜູ້ຖືກກ່າວຫາໄດ້ ຖ້າຫາກວ່າຄຳສັ່ງຄຸ້ມຄອງຍັງຖືກດຳເນີນການຢູ່. ນອກຈາກນັ້ນແລ້ວ, ທ່ານຍັງສາມາດສະເໜີຮ້ອງຂໍໃຫ້ຜູ້ຖືກກ່າວຫາ ຈ່າຍຄ່າລ້ຽງດູລູກໃຫ້ທ່ານໄດ້. ຖ້າທ່ານຮ້ອງຂໍການສະໜັບສະໜູນດັ່ງກ່າວ ກ່ຽວຂ້ອງກັບການລ້ຽງດູລູກ, ທ່ານຕ້ອງໃຫ້ຂໍ້ມູນຕໍ່ສານໃຫ້ຫຼາຍເທົ່າທີ່ຈະເປັນໄປໄດ້ກ່ຽວກັບລາຍຮັບຂອງຜູ້ຖືກກ່າວຫາ. ທ່ານສາມາດນຳສຳເນົາແບບຟອມພາສີ ແລະໃບຮຽກເກັບເງິນຕ່າງໆຂອງທ່ານ ແລະ ຜູ້ຖືກກ່າວຫາ ເພື່ອນຳມາປະກອບຕໍ່ການດຳເນີນຄະດີ ແລະ ເພື່ອໃຫ້ສານນຳມາປະກອບການດຳເນີນການພິຈາລະນາອອກຄຳສັ່ງການຄຸ້ມຄອງໄລຍະຍາວຕື່ມໄດ້.

**ການຊ່ວຍເຫຼືອຈາກເຈົ້າໜ້າທີ່** ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອຈາກຕຳຫຼວດທ້ອງຖິ່ນ ຫຼື ກອງກຳລັງເຈົ້າໜ້າທີ່ທະຫານ ເພື່ອກັບຄືນໄປບ້ານເຮືອນຂອງທ່ານ ເພື່ອເອົາເຄື່ອງໃຊ້ສ່ວນຕົວ, ສັດລ້ຽງ ຫຼື ລູກຂອງທ່ານ,ໃຫ້ອະທິບາຍ ແລະ ແຈ້ງຕໍ່ສານວ່າທ່ານຕ້ອງການຄວາມຊ່ວຍເຫຼືອຫຍັງແດ່.

**ຂໍ້ມູນກ່ຽວກັບຜູ້ຖືກກ່າວຫາ** ເຊິ່ງຂໍ້ມູນນີ້ຈະຊ່ວຍໃຫ້ເຈົ້າໜ້າທີ່ ຕະຫຼອດເຖິງສານ ຮູ້ສະຖານທີ່ໃນການສົ່ງເອກະສານທາງກົດໝາຍໃຫ້ຜູ້ຖືກກ່າວຫາ ເປັນຕົ້ນແມ່ນສຳເນົາຄຳສັ່ງຄຸ້ມຄອງ ແລະ ແຈ້ງການກ່ຽວກັບຄຳສັ່ງຄຸ້ມຄອງໄລຍະຍາວອື່ນໆຂອງທ່ານໃຫ້ຝ່າຍກົງກັນຂ້າມຊາບ. ຖ້າເຈົ້າໜ້າທີ່ຕຳຫຼວດບໍ່ສາມາດຊອກຫາທີ່ຢູ່ຂອງຜູ້ຖືກກ່າວຫາໄດ້ເພື່ອຈະສົ່ງເອກະສານສຳຄັນດັ່ງກ່າວນີ້ແລ້ວ, ການບັງຄັບໃຊ້ຄຳສັ່ງຄຸ້ມຄອງກໍຈະບໍ່ສາມາດນຳໃຊ້ເພື່ອເກີດຜົນໄດ້, **ສະນັ້ນ ມັນເປັນສິ່ງສຳຄັນທີ່ສຸດ** ທີ່ທ່ານຕ້ອງສະໜອງຂໍ້ມູນໃຫ້ຫຼາຍເທົ່າທີ່ຈະເປັນໄປໄດ້. *ເອກະສານຂໍ້ມູນດ້ານກົດໝາຍນັ້ນເປັນຄວາມລັບ* (ແບບຟອມ DV-127) ທີ່ ແນບຕິດກັບຄຳຮ້ອງຟ້ອງຂອງທ່ ານ, ມີບ່ ອນໃຫ້ທ່ ານຂຽນລາຍລະອຽດເພີ່ ມເຕີມ. ໃຫ້ແນ່ ໃຈວ່ າທ່ ານໄດ້ກອກແບບຟອມ DV-127 ຢ່ າງຄົບຖ້ວນເທົ່ າທີ່ ທ່ ານສາມາດເຮັດໄດ້.

**ຂໍ້ມູນກ່ຽວກັບຜູ້ສະເໜີຮ້ອງຟ້ອງ** ສານຕ້ອງສາມາດຕິດຕໍ່ທ່ານໄດ້ ເພື່ອການພິຈາລະນາຄະດີຂອງສານ ແລະ ເພື່ອສະໜອງເອກະສານຕ່າງໆ, ສະນັ້ນ ເປັນສິ່ງສຳຄັນຫຼາຍທີ່ຈະຕ້ອງສະໜອງຂໍ້ມູນໃຫ້ສານ ເປັນຕົ້ນແມ່ນເບີໂທລະສັບ, ທີ່ຢູ່ອີເມວ ແລະ ທີ່ຢູ່ທາງໄປສະນີປັດຈຸບັນຂອງທ່ານ. ຖ້າທ່ານຕ້ອງການ ເພື່ອຂໍໃຫ້ພະນັກງານສານ ເກັບກຳຂໍ້ມູນດັ່ງກ່າວໃຫ້ເປັນຄວາມລັບ ທ່ານສາມາດໃສ່ໃນຊອງຈົດໝາຍພິເສດສະເພາະແຕ່ພະນັກງານສານເທົ່ານັ້ນ ແລະ ບໍ່ໃຫ້ຜູ້ຖືກກ່າວຫາຊາບ. ຖ້າທ່ານຕ້ອງການຮັກສາຂໍ້ມູນສ່ວນໂຕຂອງທ່ານໃຫ້ເປັນຄວາມລັບ, ກະລຸນາແຈ້ງເຫດຜົນດັ່ງກ່າວນີ້ໃຫ້ສານ ແລະ ພະນັກງານສານຊາບໃນເວລາທີ່ທ່ານຍື່ນຄຳຮ້ອງຟ້ອງ.

**ການເຊັນ ແລະ ຍື່ນຄຳຮ້ອງຟ້ອງ** ເຊັນໃບຄຳຮ້ອງຟ້ອງຂອງທ່ານຕໍ່ໜ້າໂນຕາຣີ ຫຼື ພະນັກງານສານ. ຖ້າບໍ່ມີໂນຕາຣີ ຫຼື ພະນັກງານສານ, ໃຫ້ເຊັນໃບຄຳຮ້ອງນັ້ນ ແລະ ໃຫ້ແນບໃບ*ການຢັ້ງຢືນດ້ວຍຕົນເອງ (ບໍ່ມີໂນຕາຣີເຊັນຮັບຮອງ)* (ແບບຟອມ TF-835). ເມື່ອທ່ານລົງນາມໃນຄຳຮ້ອງແລ້ວ, ທ່ານໄດ້ຢືນຢັນວ່າທຸກສິ່ງທຸກຢ່າງທີ່ທ່ານຂຽນຂຶ້ນນັ້ນເປັນຄວາມຈິງ. ຖ້າທ່ານຍື່ນຄຳຮ້ອງຟ້ອງຂອງທ່ານ ຜ່ານທາງລະບົບອີເລັກໂທຣນິກ, ໃຫ້ບັນທຶກສຳເນົາໄວ້ບ່ອນທີ່ປອດໄພ. ຖ້າທ່ານຍື່ນຄຳຮ້ອງຟ້ອງດັ່ງກ່າວດ້ວຍຕົນເອງ, ພະນັກງານສານຈະເຮັດສຳເນົາໄວ້ໃຫ້ທ່ານ ເຊິ່ງທ່ານຕ້ອງເກັບຮັກສາໄວ້. ທ່ານສາມາດຍື່ນຄຳຮ້ອງສະໝັກຂອງທ່ານໂດຍການສົ່ງອີເມລໂດຍກົງໄປທີ່ (ອີເມວ: https://courts.alaska.gov/courtdir/efiling.htm#featured-content-1) ຫຼື ຍື່ນດ້ວຍຕົນເອງ ຕາມທີ່ຢູ່ຂອງສານໃກ້ບ້ານທ່ານ. ແຕ່ຖ້າທ່ານຢາກສະເໜີຄຳຮ້ອງຄຸ້ມຄອງໄລຍະຍາວ ທ່ານຍັງສາມາດສົ່ງເອກະສານໄປສະນີໄປໄດ້ໂດຍກົງ (ລາຍລະອຽດຂອງສຳນັກງານຢູ່ໃນເວັບໄຊຕ໌ນີ້: https://courts.alaska.gov/courtdir/index.htm).

## ຈະເກີດຫຍັງຂຶ້ນ ພາຍຫຼັງຈາກທີ່ໄດ້ຍື່ນໜັງສືຄຳຮ້ອງຂໍການຄຸ້ມຄອງ?

ເມື່ອທ່ານສະເໜີຂໍຄຳສັ່ງຄຸ້ມຄອງໄລຍະສັ້ນ, ສານຈະພິຈາລະນາ ແລະ ອະນຸມັດໃຫ້ຢ່າງໄວ, ປົກກະຕິແລ້ວແມ່ນຈະໄດ້ຮັບມື້ດຽວກັນກັບທີ່ທ່ານຍື່ນເອກະສານຄຳຮ້ອງ. ສານອາດຈະດຳເນີນການພິຈາລະນາຄະດີ ຫຼື ບໍ່ກໍ່ໄດ້. ທ່ານສາມາດສອບຖາມພະນັກງານສານຕື່ມວ່າຂັ້ນຕອນໃນເຂດທີ່ທ່ານອາໄສຢູ່ນັ້ນ ໃຊ້ເວລາດົນປານໃດ. ກະກຽມຄວາມພ້ອມ ແລະ ລໍຖ້າຮັບໂທລະສັບ ຫຼັງຈາກທີ່ທ່ານໄດ້ຍື່ນໜັງສືສະເໜີຂໍຄຸ້ມຄອງ. ຫຼັງຈາກນັ້ນ ສານຈະອອກຄຳສັ່ງໃຫ້ມີການຄຸ້ມຄອງ ຫຼື ປະຕິເສດຄຳສັ່ງຄຸ້ມຄອງ.

ຖ້າທ່ານພຽງແຕ່ສະເໜີຄຳຮ້ອງການຄຸ້ມຄອງໄລຍະຍາວ, ພະນັກງານສານຈະຕິດຕໍ່ຫາທ່ານ ຫຼື ສົ່ງໃຫ້ທ່ານທາງໄປສະນີ ແລະ ແຈ້ງໃຫ້ທ່ານຊາບວ່າການພິຈາລະນາການຄຸ້ມຄອງໄລຍະຍາວຈະໄດ້ຮັບການອະນຸມັດໃນເວລາໃດ. ສານຈະຕັດສິນວ່າໃຫ້ມີການຄຸ້ມຄອງ ຫຼື ບໍ່ ແມ່ນພາຍຫຼັງຈາກການພິຈາລະນາຄະດີແລ້ວເທົ່ານັ້ນ.

## ຈະເກີດຫຍັງຂຶ້ນ ຖ້າສານປະຕິເສດໜັງສືສະເໜີຄຳຮ້ອງຂໍຄຸ້ມຄອງໄລຍະສັ້ນຂອງຂ້າພະເຈົ້າ?

ສິ່ງທີ່ທ່ານຮ້ອງຂໍກັບທາງສານຈະບໍ່ມີຜົນບັງຄັບໃຊ້. ໝາຍຄວາມວ່າ, ທຸກຢ່າງຈະດຳເນີນໄປຕາມປົກກະຕິ ຄືກັບວ່າທ່ານບໍ່ໄດ້ຍື່ນຄຳຮ້ອງຕໍ່ສານ. ຖ້າທ່ານຂໍໃຫ້ສານຄຸ້ມຄອງໄລຍະຍາວ, ສານອາດຈະນັດຮັບຟັງຄະດີ (ປົກກະຕິພາຍໃນ 2-3 ອາທິດ) ເພື່ອຟັງເຫດຜົນຈາກທັງສອງຝ່າຍ ກ່ອນທີ່ຈະຕັດສິນວ່າຈະອະນຸມັດໜັງສືສະເໜີຂໍຄຸ້ມຄອງໄລຍະຍາວ ຫຼື ບໍ່.

## ຈະເກີດຫຍັງຂຶ້ນຖ້າສານອະນຸມັດໜັງສືສະເໜີຄຳຮ້ອງຂໍຄຸ້ມຄອງໄລຍະສັ້ນຂອງຂ້າພະເຈົ້າ?

**ການຊ່ວຍເຫຼືອຈາກເຈົ້າໜ້າທີ່ຕຳຫຼວດ.** ຖ້າວ່າສານມີຄຳສັ່ງໃຫ້ຕຳຫຼວດ ຫຼື ທະຫານເຂົ້າຊ່ວຍເຫຼືອທ່ານ (ຕົວຢ່າງ: ເພື່ອຊ່ວຍອຳນວຍຄວາມສະດວກໃຫ້ແກ່ທ່ານ ໃນການກັບໄປທີ່ພັກອາໄສຄືນ ເພື່ອໄປເອົາສິ່ງຂອງສຳພາລະ ຫຼື ລູກ), ສາມາດຕິດຕໍ່ຫາເຈົ້າໜ້າທີ່ດັ່ງກ່າວໃກ້ບ້ານທ່ານໄດ້.

**ການແຈ້ງໃຫ້ຜູ້ຖືກກ່າວຫາໃຫ້ຊາບ.** ສານຈະແຈ້ງໃຫ້ຕຳຫຼວດຊາບທັນທີກ່ຽວກັບຄຳສັ່ງຄຸ້ມຄອງຂອງສານ ໂດຍການມອບສຳເນົາເອກະສານດັ່ງກ່າວໃຫ້ກັບຜູ້ຖືກກ່າວຫາເພື່ອຮັບຊາບ. ສິ່ງນີ້ແມ່ນ ເອີ້ນວ່າ "ການຮັບຊາບ" ຄຳສັ່ງຄຸ້ມຄອງ. ເຈົ້າໜ້າທີ່ຕຳຫຼວດ, ທະຫານຂອງລັດ ຫຼື ເຈົ້າໜ້າທີ່ຮັກສາຄວາມປອດໄພສາທາລະນະຂອງບ້ານ (VPSO) ແມ່ນມີໜ້າທີ່ຮັບຜິດຊອບແຈ້ງ ແລະ ຄຸ້ມກັນໃຫ້ທາງຜູ້ຖືກກ່າວຫາຮັບຊາບຄຳສັ່ງຄຸ້ມຄອງດັ່ງກ່າວ. ຖ້າທ່ານຕ້ອງການຢາກຮູ້ວ່າຄຳສັ່ງຄຸ້ມຄອງແມ່ນໄດ້ຖືກປະຕິບັດແລ້ວຫຼື ຍັງ, ທ່ານສາມາດໂທຫາເບີສຸກເສີນສຳລັບໜ່ວຍງານກົດຫມາຍ ຫຼື ກວດເບິ່ງທີ່ເວັບໄຊຕ໌ CourtView (ເຊິ່ງເວັບໄຊຕ໌ດັ່ງກ່າວຈະອັບເດດຂໍ້ມູນ ໂດຍອາດຈະໃຊ້ເວລາເຖິງ 72 ຊົ່ວໂມງ).

**ກະລຸນາຢ່າແຈ້ງໃຫ້ທາງຜູ້ຖືກກ່າວຫາຊາບດ້ວຍໂຕທ່ານເອງ.** ເພາະອາດເປັນອັນຕະລາຍຕໍ່ຕົວທ່ານເອງ ແລະ ຕາມກົດໝາຍແລ້ວ ທ່ານບໍ່ຈຳເປັນຕ້ອງເຮັດແບບນັ້ນ. ຄຳສັ່ງດັ່ງກ່າວຈະມີຜົນບັງຄັບໃຊ້ພາຍຫຼັງທີ່ເຈົ້າໜ້າທີ່ຕຳຫຼວດໄດ້ສົ່ງໜັງສືໃຫ້ກັບຜູ້ຖືກກ່າວຫາແລ້ວ.

**ການລະເມີດຄຳສັ່ງຄຸ້ມຄອງ.** ເມື່ອຜູ້ຖືກກ່າວຫາຖືກແຈ້ງໃຫ້ປະຕິບັດຕາມຄຳສັ່ງສານແລ້ວ, ແຕ່ບໍ່ປະຕິບັດຕາມອາດຈະຖືວ່າເປັນຄວາມຜິດທາງອາຊະຍາກຳໄດ້. ຖ້າພົບເຫັນການລະເມີດຄຳສັ່ງຄຸ້ມຄອງ ກະລຸນາແຈ້ງໃຫ້ທາງເຈົ້າໜ້າທີ່ໃກ້ບ້ານທີ່ທ່ານອາໄສຢູ່ຮັບຊາບທັນທີ.

**ການຮ້ອງຂໍການຮັບຟັງຄະດີໃນອະນາຄົດ** ຖ້າວ່າທ່ານຂໍຄຳສັ່ງຄຸ້ມຄອງໄລຍະຍາວ ສານຈະກຳນົດວັນເວລາເພື່ອຮັບຟັງການໃຫ້ການຈາກທ່ານ ແລະ ຜູ້ຖືກກ່າວຫາວ່າຈະອະນຸມັດໃຫ້ຄຸ້ມຄອງໄລຍະຍາວ ຫຼື ບໍ່. ຖ້າທ່ານຍັງບໍ່ແນ່ໃຈກ່ຽວກັບການນັດຮັບຟັງຄະດີ, ໃຫ້ໂທຫາເພື່ອສອບຖາມກັບທາງສານໄດ້

**ການປ່ຽນແປງ, ຂະຫຍາຍການຕໍ່ອາຍຸ ຫຼື ສິ້ນສຸດຄຳສັ່ງຄຸ້ມຄອງຈາກສານ** ພາຍຫຼັງທີ່ສານອອກອະນຸມັດຄຳສັ່ງຄຸ້ມຄອງ, ທ່ານສາມາດສະເໜີຂໍໃຫ້ສານມີຄຳເຫັນອະນຸມັດໄດ້ດັ່ງນີ້:

- ປ່ຽນແປງ (ປັບປ່ຽນ) ຄຳສັ່ງ: ສາມາດກົດເຂົ້າເບິ່ງທີ່ *ການສະເໜີຂໍໃຫ້ມີການປັບປ່ຽນຄຳສັ່ງຄຸ້ມຄອງ* (ໃນແບບຟອມທີ DV-131 ຫຼື DV-131M)
- ເພື່ອຂໍໃຫ້ມີການສືບຕໍ່ (ຂະຫຍາຍການຕໍ່ອາຍຸຄຳສັ່ງ) ຄຳສັ່ງຄຸ້ມຄອງໄລຍະຍາວ: ສາມາດກົດເຂົ້າເບິ່ງທີ່ *ການສະເໜີຂໍໃຫ້ມີການຂະຫຍາຍການຕໍ່ອາຍຸຄຳສັ່ງຄຸ້ມຄອງໄລຍະຍາວ* (ໃນແບບຟອມທີ DV-132 ຫຼື DV-132M).
- ສິ້ນສຸດ (ຢຸດຕິ) ຄຳສັ່ງຄຸ້ມຄອງ: ສາມາດກົດເຂົ້າເບິ່ງທີ່ *ການສະເໜີຂໍໃຫ້ມີການສິ້ນສຸດຄຳສັ່ງຄຸ້ມຄອງ* (ໃບແບບຟອມທີ DV-133 ຫຼື DV-133M).

  ແບບຟອມເຫຼົ່ານີ້ແມ່ນສາມາດປະສານເອົາໄດ້ທີ່ຫ້ອງການພະນັກງານສານ ແລະ ສາມາດດາວໂຫຼດຜ່ານລະບົບອອນໄລນ໌ໄດ້ ທີ່ເວັບໄຊຕ໌: ak-courts.info/dvforms.

## ອາຊະຍາກຳກ່ຽວກັບຄວາມຮຸນແຮງພາຍໃນຄອບຄົວ

**<u>ອາຊະຍາກຳຄວາມຮຸນແຮງພາຍໃນຄອບຄົວ ມີຄື:</u>**

- ການກໍ່ເຫດ ຫຼື ພະຍາຍາມກໍ່ອາຊະຍາກຳ; ແລະ
- ການກໍ່ເຫດອາຊະຍາກຳຂອງບຸກຄົນ ຕໍ່ບຸກຄົນນັ້ນ ເຊິ່ງເປັນສະມາຊິກໃນຄອບຄົວ; ແລະ
- ການກໍ່ອາຊະຍາກຳ ທີ່ລະບຸໄວ້ຢູ່ໃນກົດໝາຍອາລາສກາ ຫຼື ການລະເມີດກົດໝາຍທີ່ຄ້າຍຄືກັນກັບກົດໝາຍຂອງເມືອງ ແລະ ລັດອື່ນໆ.

**<u>ຄວາມໝາຍຂອງຄຳວ່າ ສະມາຊິກຄອບຄົວ ລະບຸຢູ່ໃນກົດໝາຍອາລາສກາ ວ່າດ້ວຍຄວາມຮຸນແຮງພາຍໃນຄອບຄົວ ມີຄື:</u>**

(1) ຜູ້ໃຫຍ່ ຫຼື ເດັກນ້ອຍ ທີ່ມີລັກສະນະດັ່ງນີ້:
- ເປັນຜົວ-ເມຍ ຫຼື ເຄີຍເປັນຜົວ-ເມຍ
- ອາໄສຢູ່ນຳກັນ ຫຼື ເຄີຍອາໄສຢູ່ນຳກັນ
- ມີຄວາມສຳພັນທາງກາຍ (ຫຼື ເຄີຍມີເພດສຳພັນຮ່ວມກັນ)
- ມີສາຍພົວພັນທາງສາຍເລືອດ ຫຼື ຮັບເຂົ້າມາເປັນສະມາຊິກໃນຄອບຄົວຢ່າງຖືກກົດໝາຍ
- ແຕ່ງດອງ ຫຼື ເຄີຍແຕ່ງດອງກັນມາກ່ອນ
- ມີລູກນຳກັນ

(2) ເດັກທີ່ມີສາຍພົວພັນກັບບຸກຄົນທີ່ກ່າວເຖິງໃນຂໍ້ (1).

**ລາຍການຄະດີອາຊະຍາກຳກ່ຽວກັບຄວາມຮຸນແຮງພາຍໃນຄອບຄົວ ມີຄື:**

**ການທຳຮ້າຍຮ່າງກາຍ** ເກີດຂຶ້ນເມື່ອບຸກຄົນໜຶ່ງ ເຮັດບຸກຄົນອື່ນໄດ້ຮັບບາດເຈັບທາງກາຍ; ຫຼື ບຸກຄົນໜຶ່ງຂົ່ມຂູ່ຈົນເຮັດໃຫ້ບຸກຄົນອື່ນໄດ້ຮັບບາດເຈັບທາງກາຍ ແລະ ກະທຳການຂົ່ມຂູ່ໂດຍບໍ່ໄດ້ວາງແຜນໄວ້ກ່ອນ. ຖ້າມີການຂົ່ມຂູ່ເກີດຂຶ້ນ, ທ່ານສາມາດຂໍຄຳສັ່ງຄຸ້ມຄອງໄດ້ ເຖິງແມ່ນວ່າ ຜູ້ຖືກກ່າວຫາ ຍັງບໍ່ທັນໄດ້ທຳຮ້າຍຮ່າງກາຍທ່ານຈົນໄດ້ຮັບບາດເຈັບກໍຕາມ.

**ການລັກລອບວາງເພີງ ຫຼື ການຈູດເຜົາທຳລາຍໂດຍປະໝາດ** ເກີດຂຶ້ນເມື່ອບຸກຄົນໜຶ່ງ ທຳລາຍຊັບສິນຂອງບຸກຄົນອື່ນ ໂດຍການຈູດເຜົາທຳລາຍ ຫຼື ການລະເບີດ ຫຼື ການທຳລາຍຊັບສິນຂອງຜູ້ກ່ຽວເອງ ໂດຍເຮັດໃຫ້ບຸກຄົນອື່ນໄດ້ຮັບອັນຕະລາຍຈົນມີການບາດເຈັບສາຫັດ.

**ການບຸກລຸກ** ເກີດຂຶ້ນເມື່ອບຸກຄົນໜຶ່ງວາງແຜນເຂົ້າໄປໃນອາຄານ ເພື່ອກະທຳການທີ່ຜິດກົດໝາຍ.

**ການທຳລາຍຊັບສິນທາງອາຍາ** ເກີດຂຶ້ນເມື່ອບຸກຄົນໜຶ່ງທຳລາຍຊັບສິນຂອງບຸກຄົນອື່ນໂດຍເຈດຕະນາ. ການທຳລາຍຊັບສິນທາງອາຍາຍັງເກີດຂຶ້ນໄດ້ ຖ້າບຸກຄົນດັ່ງກ່າວ ຮ່ວມກັນເປັນເຈົ້າຂອງຊັບສິນທີ່ເສຍຫາຍ.

**ການບຸກລຸກທາງອາຍາ** ເກີດຂຶ້ນເມື່ອບຸກຄົນໜຶ່ງວາງແຜນເຂົ້າໄປໃນດິນແດນ, ບ້ານ ແລະ ພາຫະນະ ເພື່ອກະທຳການທີ່ຜິດກົດໝາຍ.

**ການໃຊ້ຄວາມຮຸນແຮງຕໍ່ສັດລ້ຽງ** ເກີດຂຶ້ນເມື່ອບຸກຄົນໜຶ່ງກະທຳການຂ້າສັດລ້ຽງ ຫຼື ເຮັດໃຫ້ສັດລ້ຽງໄດ້ຮັບບາດເຈັບ ເພື່ອໃຊ້ໃນການຄຸກຄາມ, ຂົ່ມຂູ່ ບຸກຄົນອື່ນ.

**ການແຊກແຊງການເບິ່ງແຍງດູແລ** ເກີດຂຶ້ນເມື່ອໜຶ່ງໃນສະມາຊິກຄອບຄົວ ຄອບຄອງເດັກໂດຍບໍ່ຖືກຕ້ອງຕາມກົດໝາຍ **ແລະ** ບຸກຄົນນັ້ນ ຍັງເກັບເດັກໄວ້ໃນຄອບຄອງໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ເປັນໄລຍະເວລາຍາວນານ ຈາກຜູ້ປົກຄອງທີ່ຖືກຕ້ອງຕາມກົດໝາຍຂອງເດັກ. ຕົວຢ່າງວ່າ: ຜູ້ປົກຄອງ ພາເດັກອອກໄປຈາກລັດໂດຍບໍ່ຖືກຕ້ອງຕາມກົດໝາຍ ເພື່ອເຮັດໃຫ້ເດັກຫ່າງຈາກຜູ້ປົກຄອງອີກຄົນໜຶ່ງເປັນໄລຍະເວລາຍາວນານ. **ກໍລະນີທີ່ບໍ່ແມ່ນ**ການແຊກແຊງການເບິ່ງແຍງລ້ຽງດູ ເມື່ອເກີດເຫດການທີ່ຜູ້ປົກຄອງນຳເດັກມາສົ່ງໃຫ້ ຜູ້ປົກຄອງອີກຄົນໜຶ່ງ ຊ້າກວ່າເວລາທີ່ຕົກລົງກັນໄວ້.

**ການຂົ່ມຂູ່ເພື່ອຊີງຊັບ ແລະ ການບີບບັງຄັບ** ສ່ວນຫຼາຍເອີ້ນວ່າ ການຂົ່ມຂູ່ (ແບ໊ກເມວ), ເຊິ່ງກໍລວມທັງການທຳຮ້າຍຮ່າງກາຍບຸກຄົນອື່ນຈົນໄດ້ຮັບບາດເຈັບ; ຫຼື ການທຳຮ້າຍບຸກຄົນອື່ນເພື່ອຊີງຊັບ; ຫຼື ການຂົ່ມຂູ່ໃຫ້ບຸກຄົນອື່ນເຮັດໃນສິ່ງທີ່ຕົນເອງຕ້ອງການໂດຍບໍ່ສະໝັກໃຈ. ຕົວຢ່າງວ່າ: ບຸກຄົນໜຶ່ງຂົ່ມຂູ່ວ່າຈະໂພສຮູບພາບ ຫຼື ວິດີໂອ ລົງໃນຊ່ອງທາງອອນໄລນ໌ (ອິນເຕີເນັດ) ເພື່ອຮຽກຮ້ອງເອົາເງິນຈາກທ່ານ.

**ການຄຸກຄາມ ຫຼື ການລ່ວງລະເມີດ** ໝາຍເຖິງ ເມື່ອຜູ້ໃດຜູ້ໜຶ່ງ ມີຈຸດປະສົງຈະຄຸກຄາມ ຫຼື ກະທຳການອື່ນໆເພື່ອເປັນການລົບກວນຄົນອື່ນ ເປັນຕົ້ນແມ່ນ:

- ໂທລົບກວນຜ່ານລະບົບສັນຍານໂທລະສັບ ແລະ ບໍ່ວາງສາຍ, ຈົນເຮັດໃຫ້ບຸກຄົນອື່ນບໍ່ສາມາດໂທ ຫຼື ຮັບໂທລະສັບຈາກບຸກຄົນທີ່ສາມໄດ້; ຫຼື
- ໂທລະສັບຫາບຸກຄົນອື່ນຊ້ຳໆ ໃນເວລາທີ່ບໍ່ສົມຄວນ; ຫຼື
- ໂທຫາ ຫຼື ທຳການພະຍາຍາມສື່ສານທຸກຮູບແບບຜ່ານທາງລະບົບອີເລັກໂທຣນິກທີ່ບໍ່ເປີດເຜີຍຊື່ ຫຼື ສະແດງຄວາມລາມົກອານາຈານ, ທີ່ອາດເປັນໄພຂົ່ມຂູ່ຕໍ່ການບາດເຈັບທາງດ້ານຮ່າງກາຍ ຫຼື ການທີ່ຢາກຈະສື່ສານທາງເພດ ຫຼື
- ເຜີຍແຜ່ ຫຼື ແຈກຢາຍຮູບພາບ ຫຼື ວິດີໂອທີ່ສະແດງໃຫ້ເຫັນອະໄວຍະວະເພດຂອງຄົນອື່ນ, ຮູທະວານ ຫຼື ເຕົ້ານົມຂອງແມ່ຍິງ ຫຼື ກິດຈະກຳທາງເພດຂອງບຸກຄົນອື່ນ.

**ການລັກພາຕົວ**: ແມ່ນການທີ່ບຸກຄົນໜຶ່ງ ກັກຂັງ ຫຼື ລັກພາໂຕອີກບຸກຄົນອື່ນ ທີ່ຂັດກັບຈຸດປະສົງຂອງຜູ້ນັ້ນ. ໂດຍທົ່ວໄປແລ້ວ, ມັນຍັງໝາຍຄວາມວ່າບຸກຄົນນັ້ນກຳລັງວາງແຜນທີ່ຈະທຳຮ້າຍຮ່າງກາຍ ຫຼື ລ່ວງລະເມີດທາງເພດເພື່ອມີເພດສຳພັນກັບບຸກຄົນອື່ນ, ສ້າງຄວາມສ່ຽງອັນໃຫຍ່ຫຼວງທີ່ຄົນອື່ນຈະໄດ້ຮັບບາດເຈັບສາຫັດ ຫຼື ທຳການປິດບັງຄົນອື່ນເພື່ອບໍ່ສາມາດໃຫ້ຄົ້ນພົບໄດ້.

**ການປະໝາດຈົນເຮັດໃຫ້ບຸກຄົນອື່ນໄດ້ຮັບອັນຕະລາຍ:** ເກີດຂຶ້ນເມື່ອການກະທຳບຸກຄົນໜຶ່ງ **ເຮັດໃຫ້ບຸກຄົນອື່ນໄດ້ຮັບບາດເຈັບສາຫັດ.** ຕົວຢ່າງວ່າ: ຫາກທ່ານກຳລັງຂັບລົດຢູ່ເທິງທາງດ່ວນ ແລ້ວມີຜູ້ໂດຍສານທີ່ນັ່ງມານຳພະຍາຍາມຍາດຈັບພວງມາໄລລົດທ່ານ ຈົນເຮັດໃຫ້ລົດເສຍຫຼັກອອກຈາກຫົນທາງ ຈົນເຮັດໃຫ້ເກີດອຸປະຕິເຫດທາງລົດຢ່າງຮ້າຍແຮງແກ່ທ່ານ.

**ການປຸ້ນຈີ້** ເກີດຂຶ້ນເມື່ອບຸກຄົນໃດໜຶ່ງບັງຄັບ ຫຼື ບັງຄັບຂົ່ມຂູ່ ເພື່ອຈີ້ເອົາເງິນ ຫຼື ຊັບສິນ ຂອງບຸກຄົນອື່ນ. ເງິນ ຫຼື ຊັບສິນ ຈະຕ້ອງຢູ່ໃກ້ກັບເຈົ້າຂອງຊັບສິນ ເມື່ອເກີດມີການປຸ້ນຈີ້ເກີດຂຶ້ນ.

**ອາຊະຍາກຳທາງເພດ** ລວມທັງຮູບແບບຂອງການລ່ວງລະເມີດທາງເພດ, ການຄຸກຄາມທາງເພດຕໍ່ເດັກ, ການຮ່ວມເພດທີ່ບໍ່ເໝາະສົມ ແລະ ການສຳຜັດທີ່ບໍ່ເໝາະສົມ. ການຄຸກຄາມທາງເພດ ຍັງສາມາດເກີດຂຶ້ນໄດ້ກັບຄູ່ຜົວ-ເມຍ. ອາຊະຍາກຳທີ່ກ່ຽວຂ້ອງກັບຮູບພາບລາມົກຂອງຜູ້ເຍົາ ກໍແມ່ນໜຶ່ງໃນອາຊະຍາກຳທາງເພດ, ແຕ່ບໍ່ໄດ້ລວມໃນອາຊະຍາກຳທີ່ກ່ຽວຂ້ອງກັບຮູບລາມົກອື່ນໆທົ່ວໄປ.

**ການສະກົດຮອຍຕາມ** ເກີດຂຶ້ນເມື່ອບຸກຄົນໜຶ່ງຕິດຕໍ່ກັບບຸກຄົນອື່ນໂດຍບໍ່ໄດ້ຮັບການຍິນຍອມ ແລະ ການກະທຳແບບນີ້ ກໍເຮັດໃຫ້ຜູ້ທີ່ຖືກກະທຳມີຄວາມຮູ້ສຶກວ່າຈະໄດ້ຮັບບາດເຈັບ ຫຼື ເຖິງແກ່ຊີວິດ.

**ການຄຸກຄາມດ້ວຍການກໍ່ການຮ້າຍ** ເກີດຂຶ້ນເມື່ອບຸກຄົນໜຶ່ງທຳການຂົ່ມຂູ່ເອົາຊີວິດຕໍ່ບຸກຄົນອື່ນ ຈົນເຮັດໃຫ້ບຸກຄົນນັ້ນເກີດຄວາມຢ້ານກົວວ່າຈະໄດ້ຮັບບາດເຈັບ. ຕົວຢ່າງວ່າ: ມີຄົນໂທລະສັບຫາທ່ານ ແລະ ຂົ່ມຂູ່ວ່າຈະຍິງປືນໃສ່ທ່ານຕອນທີ່ທ່ານກຳລັງຈະອອກຈາກບ້ານ. ເປັນອາຊະຍາກຳ ຈົນເຮັດໃຫ້ທ່ານຕ້ອງອົບພະຍົບອອກຈາກອາຄານ ສະຖານທີ່ພັກອາໄສ ລວມທັງການສ້າງຄວາມເດືອດຮ້ອນແກ່ບຸກຄົນອື່ນໆ.

**ການລະເມີດຄຳສັ່ງຄຸ້ມຄອງ** ເກີດຂຶ້ນເມື່ອບຸກຄົນໜຶ່ງກະທຳສິ່ງທີ່ຖືກຫ້າມຕໍ່ບຸກຄົນອື່ນ ເຊັ່ນ: ຄຳສັ່ງຄຸ້ມຄອງຈາກການໃຊ້ຄວາມຮຸນແຮງພາຍໃນຄອບຄົວ, ການສະກົດຮອຍຕາມ ແລະ ການຄຸກຄາມທາງເພດ.

## ຈະເປັນແນວໃດຖ້າອາຊະຍາກຳທີ່ໄດ້ຖືກກະທຳຕໍ່ຂ້າພະເຈົ້າ ຫຼື ລູກຫຼານຂອງຂ້າພະເຈົ້າບໍ່ໄດ້ລະບຸໄວ້ຂ້າງເທິງ?

ຖ້າອາຊະຍາກຳທີ່ໄດ້ຖືກກະທຳ ບໍ່ໄດ້ລະບຸໄວ້ຂ້າງເທິງ, ທ່ານຈະຕ້ອງຊອກຫາວິທີການອື່ນ ບັນດາການກະທຳດັ່ງຕໍ່ໄປນີ້ ຈະບໍ່ໄດ້ລວມໃນອາຊະຍາກຳຄວາມຮຸນແຮງໃນຄອບຄົວ ແລະ ບໍ່ໄດ້ຖືກຄຸ້ມຄອງຈາກຄຳສັ່ງຄຸ້ມຄອງ ດັ່ງນີ້:

- ການລັກຊັບ
- ການປອມແປງ
- ການໃຊ້ຢາເສບຕິດ ຫຼື ທາດເຫຼົ້າໃນທາງທີ່ຜິດ
- ການລະເລີຍເດັກ
- ການລະເມີດຄຳສັ່ງຂອງສານ (ຍົກເວັ້ນຄຳສັ່ງຄຸ້ມຄອງ), ລວມທັງການຄຸມຂັງ, ການໄປຢ້ຽມຢາມ ແລະ ການສົມຮູ້ຮ່ວມຄິດ
- ການໃສ່ຮ້າຍປ້າຍສີ
- ການຂົ່ມຂູ່ທີ່ຈະຟ້ອງຮ້ອງ ຫຼື ເຮັດລາຍງານຕໍ່ຕຳຫຼວດ ຫຼື ອົງການຕ່າງໆຂອງລັດຖະບານ.